# ລົງຄະແນນສຽງແຕ່ທໍາອິດໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**VOTE 2016**

*ທີ່ລັດມິນນີໂຊຕາທ່ານບໍ່ຈໍາເປັນຕ້ອງລໍຖ້າຈົນກ່ວາວັນເລືອກຕັ້ງ - ລົງຄະແນນສຽງແຕ່ທໍາອິດນີ້ໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

## ລົງຄະແນນສຽງແຕ່ທໍາອິດໄດ້ດ້ວຍຕົວເອງ

ທ່ານສາມາດລົງຄະແນນໃນບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ສໍານັກງານເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນ 46 ມື້ກ່ອນວັນເລືອກຕັ້ງ ໄປທີ່ mnvotes.org ເພື່ອເບິ່ງຊົ່ວໂມງແລະສະຖານທີ່

## ລົງຄະແນນສຽງແຕ່ທໍາອິດທາງໄປສະນີ

ທ່ານຍັງສາມາດສະໝັກຂໍຮັບບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ສົ່ງໃຫ້ທ່ານທາງໄປສະນີ ທ່ານຈະຕ້ອງໄດ້ສົ່ງບັດລົງຄະແນນສຽງຂອງທ່ານຄືນກ່ອນວັນເລືອກຕັ້ງ

① ສະໝັກຂໍຮັບບັດລົງຄະແນນສຽງໄດ້ເວລາໃດກໍໄດ້ໝົດປີທີ່ mnvotes.org ພະນັກງານການເລືອກຕັ້ງຈະສົ່ງເອກກະສານການເລືອກຕັ້ງເມື່ອມີບັດລົງຄະແນນສຽງ (ເບິ່ງຂ້າງຫລັງສໍາລັບວັນທີ)

② ອ່ານຄໍາແນະນໍາທີ່ມາພ້ອມກັບບັດລົງຄະແນນສຽງຂອງທ່ານຢ່າງຄັກແນ່! ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບຖ້າວ່າທ່ານກອກແບບຟອມບໍ່ສົມບູນ.

### ວັນທີຂອງປີ 2016

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 9 ສິງຫາ*

**ລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 23 ກັນຍາ ເຖິງ 7 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 18 ຕຸລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ 8 ເດືອນພຶດສະຈິກາ*

③ ທ່ານຈະຕ້ອງມີພະຍານເວລາທີ່ທ່ານລົງຄະແນນສຽງແລະຂຽນບັດລົງຄະແນນສຽງຂອງທ່ານ ພະຍານສາມາດເປັນຜູ້ລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນີໂຊຕາຫຼືຈະເປັນໂນທາຣີກໍໄດ້ ພະຍານຂອງທ່ານຕ້ອງໄດ້ເຊັນຊອງຈົດໝາຍລາຍເຊັນແລະບອກທີ່ຢູ່ຂອງເຂົາເຈົ້ານໍາ.

④ ຖ້າວ່າທ່ານບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ ທ່ານຈະໄດ້ຮັບຄໍາຮ້ອງສະໝັກຈົດທະບຽນໃນເອກກະສານຂອງທ່ານ ຖ້າຈະລົງທະບຽນ ໃຫ້ສະແດງໃຫ້ພະຍານເຫັນບັດປະຈໍາຕົວອັນໃດກໍໄດ້ທີ

*ມີຕໍ່ຂ້າງຫລັງ...*

# ລົງຄະແນນສຽງແຕ່ທ່າອິດໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2016

*...ຕໍ່ຈາກຂ້າງໜ້າ*

ລະບຸໄວ້ໃນຄຳແນະນຳ ພະຍານຂອງທ່ານຕ້ອງໄດ້ໝາຍໃສ່ຊອງຈົດໝາຍລາຍເຊັນຂອງທ່ານວ່າບັດປະຈຳຕົວອັນໃດທີ່ທ່ານສະແດງໃຫ້ເຂົາເຈົ້າເຫັນ.

⑤ ຫຼັງຈາກທີ່ທ່ານໝາຍແລ້ວໆ ໃຫ້ທ່ານສົ່ງບັດລົງຄະແນນສຽງແລະແບບຟອມກັບຄືນມາທັນທີ ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບ ຖ້າວ່າພວກເຮົາໄດ້ຮັບຫຼັງຈາກວັນເລືອກຕັ້ງ ນອກນັ້ນ ທ່ານຍັງສາມາດສົ່ງບັດລົງຄະແນນສຽງຂອງທ່ານກັບຄືນດ້ວຍຕົວເອງໃຫ້ພະນັກງານການເລືອກຕັ້ງທີ່ສົ່ງບັດລົງຄະແນນສຽງໃຫ້ທ່ານ

## *ຕິດຕາມບັດລົງຄະແນນສຽງຂອງທ່ານ*

ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທຸກບັດທີ່ໄດ້ຮັບທັນເວລາ ແລະກອກແບບຟອມຢ່າງຖືກຕ້ອງຈະຖືກນັບ ໄປທີ່ mnvotes.org ເພື່ອຕິດຕາມສະຖານະພາບບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີເລືອກຕັ້ງໄດ້ຂອງທ່ານແລະເພື່ອຢືນຢັນວ່າມັນໄດ້ຮັບແລະຖືກນັບ.

| *ວັນທີປີ 2016* | ການເລືອກຕັ້ງຂັ້ນຕົ້ນ | ການເລືອກຕັ້ງທົ່ວໄປ |
|---|---|---|
| **ບັດລົງຄະແນນສຽງເລີ່ມຕົ້ນສົ່ງ** | ວັນສຸກ ວັນທີ່ 24 ມິຖຸນາ | ວັນສຸກ ວັນທີ່ 23 ກັນຍາ |
| **ແນະນຳໃຫ້ທ່ານໄດ້ສະໝັກກ່ອນ** | ວັນສຸກ ວັນທີ່ 8 ກໍລະກົດ | ວັນສຸກ ວັນທີ່ 7 ຕຸລາ |
| **ວັນທີບັດລົງຄະແນນສຽງຈະຕ້ອງໄດ້ຮັບ** | ວັນເລືອກຕັ້ງ ວັນອັງຄານ ວັນທີ່ 9 ສິງຫາ | ວັນເລືອກຕັ້ງ ວັນອັງຄານທີ່ 8 ພຶດສະຈິກາ |

***Minneapolis Elections & Voter Services***
***vote.minneapolismn.gov • 311***

Minneapolis
Elections and Voter Services